ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກອງເລຂາຄະນະກຳມະການ

ອຳນວຍຄວາມສະດວກທາງດ້ານການຄ້າ

ເລກທີ...017.../ກຄອຄ

ນະຄອນຫຼວງວຽງຈັນ, ວັນທີ:...06...ກຸມພາ 2020

**ຮຽນ:** ທ່ານ ຫົວໜ້າກົມສົ່ງເສີມການລົງທຶນ.

**ເລື່ອງ:** ລາຍງານຜົນການຄົ້ນຄວ້າ ກ່ຽວກັບ ແຜນວຽກປັບປຸງຕົວຊີ້ວັດທີ່ 8 ''ການຄ້າລະຫວ່າງປະເທດ ສຳລັບ ສປປ ລາວ ໄລຍະ ປີ 2020-2022.

- ອີງຕາມ ຄຳສັ່ງ ທ່ານ ນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກການປະສານງານໃນການດຳເນີນທຸລະກິດໃນ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງຄ້າ ສະບັບເລກທີ 001/ຄອຄສ, ລົງວັນທີ 26 ທັນວາ 2018.
- ອີງຕາມໜັງສືສະເໜີຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 2568/ກຜທ.ລທ2, ລົງວັນທີ 22 ພະຈິກ 2019.

ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງ ອຸດສາຫະກຳ ແລະ ການຄ້າ ໃນນາມເປັນ ຫ້ອງການປະຈຳກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ເປັນຜູ້ຮັບຜິດຊອບຫຼັກຕໍ່ວຽກງານປັບປຸງຕົວຊີ້ວັດທີ 8 ''ການຄ້າລະຫວ່າງປະເທດ'' ຕາມຄຳສັ່ງ ທ່ານນາຍົກລັດຖະມົນຕີ ເລກທີ 02/ນຍ ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກການປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ ຂໍຖືເປັນກຽດຮຽນລາຍງານມາຍັງ ທ່ານ ຊາບ ກ່ຽວກັບ ຄວາມຄືບໜ້າມາຮອດປະຈຸບັນ ແລະ ແລະ ແຜນການປັບປຸງຕົວຊີ້ວັດດັ່ງກ່າວໃນປີ 2020-2022 (ລາຍລະອຽດແຜນການປັບປຸງ ແມ່ນຄັດຕິດມາໃນຕາຕະລາງຊ້ອນທ້າຍນີ້).

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບຕາມທາງຄວນດ້ວຍ.

ຫົວໜ້າກົມ

(ຮອງຫົວໜ້າ ກຄອຄ)

ສຸລິຍົນ ພິລາວົງ

| | |
|---|---|
| ຫົວຂໍ້ | ສະພາບຄວາມຍາກງ່າຍໃນການດຳເນີນທຸລະກິດໃນ ສປປ ລາວ |
| ໄລຍະເວລາ | ກໍລະກົດ 2019 - ເມສາ 2021 |
| ຕົວຊີ້ວັດທີ 8 | ການຄ້າລະຫວ່າງປະເທດ |
| ຜູ້ຮັບຜິດຊອບ | ກົມນຳເຂົ້າ - ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ |

| ເລກທີ | ອະທິບາຍ | ສະຖານະປັດຈຸບັນ (DB 2020) | | ຜົນໄດ້ຮັບທີ່ຄາດຄະເນ | | ແຜນການປະຕິຮູບ | ກິດຈະກຳຍ່ອຍ | 2019 | | 2020 | | | | 2021 | | 2022 | | | | ຄວາມຄືບໜ້າ | ພາກສ່ວນທີ່ກ່ຽວຂ້ອງ | ຜູ້ໃຫ້ທຶນ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | | | | Q3 | Q4 | Q1 | Q2 | Q3 | Q4 | Q1 | Q2 | Q1 | Q2 | Q3 | Q4 | | | |
| | I. ຂັ້ນຕອນ | ເວລາ (ຊົ່ວໂມງ) | ຄ່າໃຊ້ຈ່າຍ (USD) | ເວລາ (ຊົ່ວໂມງ) | ຄ່າໃຊ້ຈ່າຍ (USD) | | | | | | | | | | | | | | | | | |
| ຄວາມສອດຄ່ອງໃນການສົ່ງອອກຕາມຊາຍແດນ | | 9 | 140 | | | | | | | | | | | | | | | | | | | |
| 1.1 | ການປ່ອຍ ແລະ ການກວດກາສິນຄ້າໂດຍເຈົ້າໜ້າທີ່ພາສີ | 8 | 130 | | | ພັດທະນາລະບົບການບໍລິຫານຄວາມສ່ຽງຮ່ວມກັນລະຫວ່າງເຈົ້າໜ້າທີ່ທີ່ກ່ຽວຂ້ອງປະຈຳດ່ານ (ພາສີ, ກັກກັນພືດ-ສັດ, ອາຫານ ແລະ ຢາ) | 1. ປັບປຸງຄ່າຄວາມສ່ຽງໃນລະບົບ ອາຊີກູດາ ໂດຍລວມເອົາຄ່າ ຄວາມສ່ຽງຂອງຂະແໜງການລັດ ອື່ນໆ ເຂົ້ານຳ | × | | | | | | | | | | | | | ກົມພາສີ | LCT |
| 1.2 | ການປ່ອຍ ແລະ ການກວດກາສິນຄ້າໂດຍອົງການຕ່າງໆທີ່ບໍ່ແມ່ນພາສີ | 0 | - | | | | 2. ສ້າງກົນໄກກວດກາຮ່ວມກັບ ຂະແໜງການລັດອື່ນໆ ທີ່ປະຈຳ ຢູ່ດ່ານຊາຍແດນ | | | × | | | | | | | | | | | | |
| 1.3 | ການຈັດການຢູ່ທ່າເຮືອ ຫຼື ຊາຍແດນ | 1 | 10.0 | | | | 3. ກົມພາສີ ດຳເນີນການສຶກສາ TRS ປີ 2019 ຊຶ່ງການ ສຶກສາດັ່ງກ່າວກວມເອົາ ຂັ້ນຕອນການແຈ້ງພາສີ ແລະ ການກວດກາຂອງຂະແໜງກ່ຽວ ຂ້ອງຢູ່ດ່ານ ແຕ່ບໍ່ໄດ້ກວດ ເອົາການຂັ້ນຕອນການອອກອະ ນຸຍາດຂອງຂະແໜງການລັດຕ່າງໆ. | | | | | | | | | | | | | ສຳເລັດ | | |
| | | | | | | | 4. ເຜີຍແຜ່ຜົນການສຶກສາ TRS 2019 | × | | | | | | | | | | | | | | |
| | | | | | | | 5. ຈັດສຳມະນາ TRS ຮ່ວມກັບ ບັນດາຂະແໜງການລັດທີກ່ຽວ ຂ້ອງ ເພື່ອສ້າງຄວາມເຂົ້າໃຈຂັ້ນ ພື້ນຖານ ແລະ ສ້າງແຜນໃນການ ສຶກສາ TRS ຮ່ວມກັນ | | | × | | | | | | | | | | | | |
| | | | | | | | 6. ແຕ່ງຕັ້ງຄະນະຮັບຜິດຊອບ TRS 2020 | | | | × | | | | | | | | | | | |
| | | | | | | | 7. ສຶກສາ TRS 2020 | | | | | | × | | | | | | | | | |
| ຄວາມສອດຄ່ອງດ້ານເອກະສານສຳລັບການສົ່ງອອກ | | 60 | 235 | | | | | | | | | | | | | | | | | | | |
| 2.1 | ໃບຂົນສົ່ງ | 60 | 235 | | | **ປັບປຸງບັນດານິຕິກຳ:** **1.** ດຳລັດວ່າດ້ວຍການສົ່ງອອກຜະລິດຕະພັນແຮ່ທາດ ເລກທີ 90/ນຍ, ລົງວັນທີ 09/6/2008. **2.** ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນຳເຂົ້າ ແລະ ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເລກທີ 0352/ພບ, ລົງວັນທີ 13/3/2012. **3.** ຂໍ້ຕົກລົງ ວ່າດ້ວຍການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເລກທີ 0481/ພບ, ລົງວັນທີ 20/4/2012. **4.** ແຈ້ງການ ກ່ຽວກັບຂັ້ນຕອນການສະເໜີແຜນການຈຳໜ່າຍ ແລະ ການຈຳໜ່າຍ ຜະລິດຕະພັນແຮ່ທາດ ເລກທີ 0011/ກຄຣ3, ລົງວັນທີ 04/1/2019. | 1. ທົບທວນຄືນ ເນື້ອໃນນິຕິກຳດັ່ງກ່າວ | | | × | | | | | | | | | | | ກົມຄຸ້ມຄອງບໍ່ແຮ່ | ບໍ່ມີ |
| | | | | | | | 2. ຈັດຈ້າງ ຊ່ຽວຊານດ້ານກົດໝາຍ ເພື່ອຊ່ວຍປັບປຸງນິຕິກຳ | | | × | | | | | | | | | | | | |
| 2.2 | ໃບອະນຸຍາດຈາກກະຊວງພະລັງງານ ແລະ ບໍ່ແຮ່ຂອງລາວ | | | | | | 3. ຮ່າງໜັງສືສະເໜີ ລມຕ ກະຊວງ ພບ ພິຈາລະນາ ການປັບປຸງນິຕະກຳດັ່ງກ່າວ ອາດຈະລວມເນື້ອໃນຂອງບັນດານິຕິກຳດັ່ງກ່າວເຂົ້າເປັນດຳລັດສະບັບດຽວກັນ. | | | | × | | | | | | | | | | | |
| 2.3 | ໃບຫຸ້ມຫໍ່ | | | | | | 4. ສ້າງແຜນວຽກໃນການປັບປຸງ | | | | × | | | | | | | | | | | |
| 2.4 | ເອກະສານຂົນສົ່ງຜ່ານແດນສິນຄ້າ | | | | | | 5. ຈັດກອງປະຊຸມຮ່ວມກັບຂະແໜງການກ່ຽວຂ້ອງ ເພື່ອປຶກສາຫາລືວິທີຈັດຕັ້ງປະຕິບັດ | | | | | | × | | | | | | | | | |
| 2.5 | ໃບແຈ້ງພາສີຂາອອກ | | | | | | 6. ດຳເນີນການຄົ້ນຄວ້າ ແລະ ປັບປຸງນິຕິກຳດັ່ງກ່າວ | | | | | | × | | | | | | | | | |
| 2.6 | ສຳເນົາໃບທະບຽນວິສາຫະກິດ | | | | | | 7. ສົ່ງຮ່າງດຳລັດໃຫ້ຂະແໜງການກ່ຽວຂ້ອງ ເພື່ອປະກອບຄຳຄິດເຫັນ | | | | | | | × | | | | | | | | |
| 2.7 | ສຳເນົາໃບທະບຽນອາກອນ | | | | | | 8. ປັບປຸງຮ່າງດຳລັດ ຕາມຄຳເຫັນຂອງຂະແໜງການກ່ຽວຂ້ອງ. | | | | | | | × | | | | | | | | |
| 2.8 | ໃບຢັ້ງຢືນ SOLAS | | | | | | 9. ຈັດກອງປະຊຸມເປີດກວ້າງລະດົມຄຳຄິດເຫັນທັງພາກລັດ ແລະ ເອກະຊົນ | | | | | | | | × | | | | | | | |
| 2.9 | ໃບແຈ້ງລາຄາ | | | | | | 10. ປັບປຸງຕາມຄຳເຫັນຂອງກອງປະຊຸມ | | | | | | | | | × | | | | | | |
| | | | | | | | 11. ສະເໜີຮ່າງດຳລັດ ຕໍ່ກອງປະຊຸມລັດຖະບານ | | | | | | | | | | × | | | | | |
| | | | | | | | 12. ປັບປຸງ ພາຍຫຼັງກອງປະຊຸມລັດຖະບານ | | | | | | | | | | × | | | | | |
| | | | | | | | 13. ສະເໜີຕໍ່ກອງປະຊຸມລັດຖະບານ ເທື່ອສຸດທ້າຍ | | | | | | | | | | | × | | | | |
| | | | | | | | 14. ປັບປຸງ ພາຍຫຼັງກອງປະຊຸມລັດຖະບານ | | | | | | | | | | | × | | | | |
| | | | | | | | 15. ສະເໜີລັດຖະບານເຊັນດຳລັດ | | | | | | | | | | | | × | | | |
| | | | | | | | 16. ລົງຈົດໝາຍເຫດທາງລັດຖະການ ນຳກະຊວງຍຸຕິທຳ | | | | | | | | | | | | × | | | |
| ຄວາມສອດຄ່ອງໃນການນຳເຂົ້າຕາມຊາຍແດນ | | 11 | 224 | | | | | | | | | | | | | | | | | | | |
| 3.1 | ການປ່ອຍ ແລະ ການກວດກາສິນຄ້າໂດຍເຈົ້າໜ້າທີ່ພາສີ | 4 | 90 | | | (ຄືກັນກັບກິດຈະກຳ ເພື່ອຄວາມສອດຄ່ອງໃນການສົ່ງອອກຕາມຊາຍແດນດ້ານເທິງ) | | | | | | | | | | | | | | | ກົມພາສີ | LCT |
| 3.2 | ການປ່ອຍ ແລະ ການກວດກາສິນຄ້າໂດຍອົງການຕ່າງໆທີ່ບໍ່ແມ່ນພາສີ | 3.5 | 102.5 | | | | | | | | | | | | | | | | | | | |
| 3.3 | ການຈັດການຢູ່ທ່າເຮືອ ຫຼື ຊາຍແດນ | 3 | 31 | | | | | | | | | | | | | | | | | | | |

| ເລກທີ | ອະທິບາຍ | ສະຖານະປັດຈຸບັນ (DB 2020) | | ຜົນໄດ້ຮັບທີ່ຄາດຄະເນ | | ແຜນການປະຕິຮູບ | ກິດຈະກຳຍ່ອຍ | 2019 | | 2020 | | | | 2021 | | 2022 | | | | ຄວາມຄືບໜ້າ | ພາກສ່ວນທີ່ກ່ຽວຂ້ອງ | ຜູ້ໃຫ້ທຶນ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | | | | Q3 | Q4 | Q1 | Q2 | Q3 | Q4 | Q1 | Q2 | Q1 | Q2 | Q3 | Q4 | | | |
| | I. ຂັ້ນຕອນ | ເວລາ (ຊົ່ວໂມງ) | ຄ່າໃຊ້ຈ່າຍ (USD) | ເວລາ (ຊົ່ວໂມງ) | ຄ່າໃຊ້ຈ່າຍ (USD) | | | | | | | | | | | | | | | | | |
| **ຄວາມສອດຄ່ອງດ້ານເອກະສານການນຳເຂົ້າ** | | **60** | **115** | | | | | | | | | | | | | | | | | | | |
| 4.1 | ໃບແຈ້ງລາຄາ | | | | | | | | | | | | | | | | | | | | | |
| 4.2 | ໃບແຈ້ງພາສີນຳເຂົ້າ | | | | | | | | | | | | | | | | | | | | | |
| 4.3 | ໃບຫຸ້ມຫໍ່ | | | | | | | | | | | | | | | | | | | | | |
| 4.4 | ໃບຂົນສົ່ງທາງລົດ | | | | | | | | | | | | | | | | | | | | | |
| 4.5 | ລາຍການສິນຄ້າ | | | | | | | | | | | | | | | | | | | | | |
| 4.6 | ສຳເນົາໃບທະບຽນວິສາຫະກິດ | | | | | | | | | | | | | | | | | | | | | |
| 4.7 | ສຳເນົາໃບທະບຽນອາກອນ | | | | | | | | | | | | | | | | | | | | | |
| 4.8 | ສຳເນົາໃບອະນຸຍາດສົ່ງອອກ | | | | | | | | | | | | | | | | | | | | | |
| 4.9 | ສຳເນົາໃບອະນຸຍາດນຳເຂົ້າ | 60 | 115 | | | ສ້າງຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງຊິ້ນສ່ວນຍານພາຫະນະ ສຳລັບຜະລິດ ແລະ ປະກອບຢູ່ໂຮງງານໃນ ສປປ ລາວ | 1. ຜ່ານຮ່າງຂໍ້ຕົກລົງເຣັດວຽກຮ່ວມກັບພະແນກນິຕິກຳ | | | | × | | | | | | | | | | ກົມອຸດສາຫະກຳ | ບໍ່ມີ |
| | | | | | | | 2. ຜ່ານເນື້ອໃນຮ່ວມກັບພະແນກ ອຄ ແຂວງທີ່ມີໂຮງງານປະກອບລົດຕັ້ງຢູ່ | | | | | × | | | | | | | | | | |
| | | | | | | | 3. ຈັດກອງປະຊຸມກັບພາກສ່ວນທີ່ກ່ຽວຂ້ອງ ແລະ ນັກທຸລະກິດ | | | | | × | | | | | | | | | | |
| | | | | | | | 4. ປັບປຸງລຽບລຽງຕາມຄຳເຫັນ | | | | | × | | | | | | | | | | |
| | | | | | | | 5. ຜ່ານ ແລະ ຮຽບຮຽງກັບພະແນກນິຕິກຳ, ຫ້ອງການເພື່ອເອກະພາບຂັ້ນຕອນສຸດທ້າຍ ແລະ ມີຄຳເຫັນ | | | | | | × | | | | | | | | | |
| | | | | | | | 6. ສະເໜີ ລມຕ ຮັບຮອງ | | | | | | × | | | | | | | | | |
| | | | | | | | 7. ຈັດຕັ້ງເຜີຍແຜ່ ຂໍ້ຕົກລົງຍານພາຫະນະ ພາຍຫຼັງເຊັນຮັບຮອງແລ້ວ ຮ່ວມກັບພາກລັດທີ່ກ່ຽວຂ້ອງ ແລະ ນັກທຸລະກິດ | | | | | | × | | | | | | | | | |
| | | | | | | ສ້າງຄຳສັ່ງ ກ່ຽວກັບການຍົກເລີກການອອກໃບຢັ້ງຢືນນຳເຂົ້າຊິ້ນສ່ວນຍານພາຫະນະເພື່ອມາຜະລິດ ແລະ ປະກອບ ຢູ່ໂຮງງານ ສະບັບເລກທີ 1848/ອຄ.ກອຫ, ລົງວັນທີ 26 ທັນວາ 2019 | | | | | | | | | | | | | | ສຳເລັດ | | |
| | | | | | | ສ້າງກົດໝາຍ ວ່າດ້ວຍຍານພາຫະນະ ໃຫ້ສອດຄ່ອງກັບສະພາບການຕົວຈິງ ເພື່ອປ່ຽນແທນຂໍ້ກຳນົດ 4312/ຄຂປກ ແລະ ທັງເປັນການຜັນຂະຫຍາຍຂໍ້ຕົກລົງວ່າດ້ວຍການຮັບຮູ້ເຊິ່ງກັນ ແລະ ກັນ ໃນກອບຂອງວຽກງານຊິ້ນສ່ວນຍານພາຫະນະອາຊຽນ (ASEAN MRA) | 1. ຄົ້ນຄ້ວາຮ່າງກົດໝາຍຍານພາຫະນະທາງບົກ | | | | × | | | | | | | | | | ກົມຂົນສົ່ງ | ບໍ່ມີ |
| | | | | | | | 2. ຈັດກອງປະຊຸມທາບທາມເປີດກ້ວາງທົ່ວປະເທດ | | | | × | | | | | | | | | | | |
| | | | | | | | 3. ຜ່ານຮ່າງກົດໝາຍທີ່ກອງປະຊຸມລັດຖະບານ | | | | × | | | | | | | | | | | |
| | | | | | | | 4. ຜ່ານຮ່າງກົດໝາຍ ກອງປະຊຸມສະພາແຫ່ງຊາດ | | | | × | | | | | | | | | | | |
| | | | | | | | 5. ປັບປຸງຮ່າງລະບຽບ ວ່າດ້ວຍການກຳນົດມາດຕະຖານເຕັກນິກຍານພາຫະນະໃຫ້ສອດຄ່ອງກັບ MRA | | | | | | × | | | | | | | | | |